**ມິຊຊາສະຫລອງປາສກາ**

**ວັນອາທິດ 21 ເມສາ 2019**



**ພຣະວໍລະສານໂດຍນັກບຸນຢວງ 20, 1-9**

ແຕ່ເຊົ້າໆ, ມື້ຕົ້ນອາທິດ, ເວລາຍັງມືດຢູ່, ນາງມາຣີອາມັກດາເລນາໄປຄູຫາ ແລະເຫັນແຜ່ນຫີນຖືກຍົກອອກຈາກຄູຫາ. ນາງຈຶ່ງແລ່ນຫລົບເມືອຫາເປໂຕແລະສາວົກຜູ້ໜຶ່ງທີ່ພຣະເຢຊູເຈົ້າຊົງຮັກແພງບອກກັບເຂົາວ່າ: « ມີຄົນເອົາສົບພຣະອາຈານໄປແລ້ວ ບໍ່ຮູ້ວ່າເອົາໄປໄວ້ໃສ ».

ເປໂຕແລະສາວົກອີກຜູ້ໜຶ່ງຈຶ່ງອອກໄປເບິ່ງທີ່ຄູຫາ, ທັງສອງແລ່ນໄປແຕ່ສາວົກຜູ້ໜຶ່ງນັ້ນແລ່ນໄວກວ່າເປໂຕຈຶ່ງໄປຮອດຄູຫາກ່ອນ. ເຂົາກົ້ມລົງສ່ອງເບິ່ງເຫັນຜ້າຫໍ່ສົບວາງຢູ່ກັບດິນ, ແຕ່ບໍ່ໄດ້ເຂົ້າໄປທາງໃນ. ຊີມອນເປໂຕຜູ້ແລ່ນນຳຫລັງກໍມາຮອດ. ເພິ່ນເຂົ້າໄປໃນຄູຫາ ກໍເຫັນຜ້າຫໍ່ສົບວາງຢູ່ກັບດິນພ້ອມທັງຜ້າປົກໜ້າດ້ວຍ. ຜ້ານີ້ບໍ່ໄດ້ປົນກັບຜ້າຫໍ່ສົບ ແຕ່ພັບໄວ້ຢູ່ບ່ອນຕ່າງຫາກ. ແລ້ວສາວົກຜູ້ມາຮອດກ່ອນນັ້ນກໍເຂົ້າໃນຄູຫາ. ເພິ່ນໄດ້ເຫັນແລະເຊື່ອ. ຍ້ອນເຂົາຍັງບໍ່ທັນເຂົ້າໃຈພຣະຄຳພີທີ່ກ່າວວ່າ: « ພຣະອົງຈະຕ້ອງກັບເປັນຄືນມາຈາກພວກຜູ້ຕາຍ ».

ນີ້ແມ່ນວາຈາຂອງພຣະກຣິສໂຕເຈົ້າ

**ບົດແບ່ງປັນ: ຢວງ 20, 1-9**

ວັນນີ້, ເປັນມື້ຕົ້ນຂອງສັບປະດາ, ເປັນວັນທີ່ພຣະເຢຊູເຈົ້າກັບເປັນຄືນມາຈາກຄວາມຕາຍ, ເປັນເຫດການແຫ່ງຄວາມຊື່ນຊົມຍິນດີສຳລັບທຸກຄົນທີ່ເຊື່ອໃນພຣະອົງ. ແຕ່ເຫດການນີ້ຈະເປັນຄວາມຍິນດີທີ່ແທ້ຈິງສຳລັບພວກເຮົາ ກໍຕໍ່ເມື່ອພວກເຮົາໄດ້ພ້ອມກັບພຣະເຢຊູເຈົ້າຂ້າມຜ່ານຊ່ວງເວລາ 40 ວັນ, ຊຶ່ງພວກເຮົາຮຽກວ່າ: ກຳນົດບຳເພັນສິນ. ໄລຍະເວລາ 40 ວັນນີ້ ເປັນຊ່ວງແຫ່ງການລໍຖ້າ, ເວລາແຫ່ງການທົດສອບ, ແຫ່ງການທົນທໍລະມານ ແລະຕາຍ. ແລະຊ່ວງເວລາແຫ່ງການທໍລະມານແລະຕາຍນີ້ພວກເຮົາຮຽກວ່າ: ອາທິດສັກສິດ ຫລືອາທິດແຫ່ງມະຫາທໍລະມານຂອງພະເຢຊູເຈົ້າ. ແຕ່ເຫດການບໍ່ໄດ້ຢຸດຢູ່ທີ່ວັນສຸກສັກສິດ, ຍ້ອນມີວັນເສົາສັກສິດ, ວັນແຫ່ງການຂ້າມຜ່ານຄວາມຕາຍໄປສູ່ຊີວິດ ແລະແນ່ນອນວັນແຫ່ງໄຊຊະນະ, ວັນແຫ່ງການກັບເປັນຄືນມາຂອງພຣະເຢຊູເຈົ້າ.

ເຫດການທີ່ກ່າວມາຂ້າງເທິງນີ້ມີຄວາມກ່ຽວພັນຢ່າງໃດກັບຊີວິດຄວາມເຊື່ອຂອງພວກເຮົາ? ຖ້າພວກເຮົາຄິດພິດຈາລະນາແລະເບິ່ງຄືນຊີວິດຂອງຕົນແລ້ວ, ພວກເຮົາຈະເຫັນວ່າມື້ທີ່ພວກເຮົາເກີດມາມືນຕາເບິ່ງໂລກແມ່ນມື້ທີ່ພວກເຮົາກ້າວເຂົ້າສູ່ຊ່ວງເວລາ 40 ວັນ. ເປັນໄລຍະເວລາແຫ່ງການເຕີບໃຫຍ່, ການລໍຖ້າ, ການທົດສອບຂອງຊີວິດ. ຊ່ວງເວລາແຫ່ງອຸປະສັກ, ແຫ່ງການຕໍ່ສູ້ກັບຊີວິດ. ທ້າຍສຸດ, ແມ່ນເວລາແຫ່ງການຈາກໂລກນີ້ໄປ. ແຕ່ຄວາມຕາຍນີ້ເປັນຄຳສຸດທ້າຍໃນຊີວິດຂອງພວກເຮົາບໍ? ແນ່ນອນວ່າ ບໍ່. ຍ້ອນຫຍັງ? ຍ້ອນພຣະເຢຊູເຈົ້າ, ຜູ້ເປັນອ້າຍກົກຂອງພວກເຮົາໄດ້ໄຊຊະນະຄວາມຕາຍແລ້ວ ພຣະອົງໄດ້ກັບເປັນຄືນມາຈາກຄວາມຕາຍ. ແລະພວກເຮົາຜູ້ທີ່ເຊື່ອໃນພຣະອົງ, ພວກເຮົາກໍຈະໄດ້ກັບເປັນຄືນມາເໝືອນດັ່ງພຣະອົງ. ນີ້ແລແມ່ນຄວາມເຊື່ອຂອງພວກເຮົາ ແລະແມ່ນຄວາມເຊື່ອຂອງພຣະກຣິສຕະຈັກຊຶ່ງພວກເຮົາມີຄວາມພາກພູມໃຈປະກາດອອກມາໃນມື້ທີ່ພວກເຮົາຮັບສິນລ້າງບາບ.

ຖ້າພວກເຮົາເຂົ້າໃຈຄວາມໝາຍຂອງການກັບເປັນຄືນມາຂອງພຣະເຢຊູເຈົ້າ, ພວກເຮົາຈະມີຄວາມຫວັງແລະພະລັງເພື່ອປະເຊີນໜ້າແລະສູ້ທົນກັບຄວາມທຸກຍາກລຳບາກ, ຄວາມເຈັບປ່ວຍ, ຄວາມສິ້ນຫວັງແລະຄວາມຕາຍ. ເພາະຈຸດໝາຍປາຍທາງແຫ່ງຊີວິດຂອງພວກເຮົາຄືການຢູ່ຮ່ວມກັບພຣະເຈົ້າໃນອານາຈັກຂອງພຣະອົງ. ດັ່ງທີ່ນັກບຸນເປົາໂລກ່າວວ່າ: *ຖ້າພວກເຮົາຮ່ວມທຸກນຳພຣະເຢຊູເຈົ້າ, ນຳພຣະອົງພວກເຮົາຈະຊື່ນຊົມຍິນດີ, ຖ້າພວກເຮົາຮ່ວມຕາຍນຳພຣະອົງ, ນຳພຣະອົງພວກເຮົາຈະມີຊີວິດ.*

ຂໍໃຫ້ແສງສະວ່າງຂອງວັນບຸນປາສກາ, ວັນແຫ່ງຄວາມຍິນດີນີ້ຂັບໄລ່ຄວາມມືດ, ຄວາມໂສກເສົ້າແລະຄວາມສິ້ນຫວັງອອກຈາກດວງໃຈຂອງພວກເຮົາ. ເພື່ອວ່າຄວາມຍິນດີຂອງພຣະເຢຊູເຈົ້າຜູ້ກັບຄືນຊີບຈາກຄວາມຕາຍ ຈະໄດ້ເປັນຄວາມຍິນດີຂອງພວກເຮົາແຕ່ລະຄົນດັ່ງດຽວກັນ. ອາແມນ

**ສຸກສັນວັນປາສກາ!**

ຄຸນພໍ່ ອົງຕອນ ກຽດຕິສັກ